**ຄຳຖາມທີ່ຖືກຖາມເລື້ອຍໆ**

1) **ເປັນຫຍັງທະນາຄານ ເອເອັນແຊັດ ຈຶ່ງມີການປ່ຽນແປງຈາກ "ທະນາຄານ ເອເອັນແຊັດ (ລາວ) ຈຳກັດ" ມາເປັນ "ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນຈຳກັດ ສາຂາລາວ"?**

   ພວກເຮົາກຳລັງດຳເນີນການປ່ຽນແປງພາຍໃນ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດ ໃນການສຸມໃສ່ການໃຫ້ ບໍລິການທາງດ້ານຜະລິດຕະພັນຂອງທະນາຄານ ໃຫ້ແກ່ບັນດາລູກຄ້ານິຕິບຸກຄົນ. ການປ່ຽນແປງນີ້ແມ່ນເພື່ອສະໜັບສະໜູນການເຕີບໃຫຍ່ຂະຫຍາຍຕົວຂອງທຸລະກິດໃນອະນາຄົດ ແລະ ການໃຫ້ບໍລິການທີ່ໜ້າປະທັບໃຈ ໃຫ້ແກ່ລູກຄ້າຢູ່ພາຍໃນ ສ.ປ.ປ ລາວ.

2) **ການປ່ຽນແປງນີ້ແມ່ນຈະມີຜົນບັງຄັບໃຊ້ມື້ໃດ?**

   ການປ່ຽນແປງນີ້ແມ່ນຈະມີຜົນບັງຄັບໃຊ້ ນັບຕັ້ງແຕ່ວັນທີ **08 ມີນາ 2019**, ເວລາ 12:00ໂມງເຊົ້າ

3) **ການເປັນ"ທະນາຄານ ເອເອັນແຊັດ (ລາວ) ຈຳກັດ" ແລະ ການເປັນ "ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນຈຳກັດ ສາຂາລາວ" ແມ່ນມີຄວາມແຕກຕ່າງກັນຄືແນວໃດ?**

   ຄວາມແຕກຕ່າງທີ່ສຳຄັນແມ່ນການປ່ຽນແປງສະຖານະທາງດ້ານກົດໝາຍ ເຊິ່ງທາງທະນາຄານ ເອເອັນແຊັດ ໃຊ້ໃນການດຳເນີນທຸລະກິດໃນ ສ.ປ.ປ ລາວ. ໃນໄລຍະຜ່ານມາ ການດຳເນີນງານ ຂອງທະນາຄານ ເອເອັນແຊັດ ແມ່ນຢູ່ໃນຮູບແບບຂອງທະນາຄານລູກ, ແຕ່ນັບຈາກນີ້ເປັນຕົ້ນໄປຈະໄດ້ດຳເນີນໄປໃນຮູບແບບຂອງ ທະນາຄານສາຂາຂອງ ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ. ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດເປັນໜຶ່ງໃນກຸ່ມບໍລິສັດໃຫຍ່ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບອົດສະຕາລີ ເຊິ່ງມີ ມູນຄ່າຕະຫຼາດຫຼາຍກວ່າ AUD$76,000,000,000 (ເຈັດສິບຫົກຕື້ໂດລາອົດສະຕາລີ) ແລະ ມູນຄ່າຊັບສິນລວມແມ່ນຫຼາຍກວ່າ AUD$942,600,000,000 (ເກົ້າຮ້ອຍສີ່ສິບສອງຕື້ຫົກຮ້ອຍລ້ານໂດລາອົດສະຕາລີ) ຊຶ່ງເປັນມູນຄ່າ ນະວັນທີ 30 ເດືອນ ກັນຍາ 2018.

**4) ຊື່ໃຫມ່ຂອງທະນາຄານແມ່ນຫຍັງ?**

ຊື່ໃຫມ່ຂອງທະນາຄານແມ່ນ "ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ"

**5) ສະຖານະໃຫມ່ທາງດ້ານກົດຫມາຍນີ້ແມ່ນມີຄວາມຫມາຍແນວໃດຕໍ່ກັບບັນດາລູກຄ້າ ໃນ ສ.ປ.ປ ລາວ?**

ນັບຕັ້ງແຕ່ວັນທີ **08 ມີນາ 2019**, ບັນດາຜະລິດຕະພັນຕ່າງໆຂອງທະນາຄານ, ເລກບັນຊີລູກຄ້າ ແລະ ວົງເງິນສິນເຊື່ອ ຂອງລູກຄ້າທຸກລາຍ ຈະຖືກໂອນໄປຂື້ນກັບ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ.

ຈະບໍ່ມີຄ່າໃຊ້ຈ່າຍໃດໆ ຫຼື ສິ່ງທີ່ລູກຄ້າ ຕ້ອງໄດ້ເຮັດ ໃນການປ່ຽນແປງຄັ້ງນີ້. ພະນັກງານທະນາຄານ, ທີ່ຕັ້ງຂອງທະນາຄານ ແລະ ຜູ້ຈັດການສາຍພົວພັນທີ່ຮັບຜິດຊອບທ່ານແມ່ນບໍ່ມີການປ່ຽນແປງໃດໆ.

**6) ຂ້າພະເຈົ້າໄດ້ຮັບຈົດໝາຍແຈ້ງການກ່ຽວກັບການປ່ຽນແປງລະບົບໃໝ່ຂອງທະນາຄານ ໃນ ຊ່ວງເດືອນ ທັນວາ ປີ 2018, ມັນມີຄວາມກ່ຽວຂ້ອງແນວໃດຕໍ່ການປ່ຽນແປງສະຖານະທາງດ້ານກົດໝາຍຂອງທະນາຄານໃນຄັ້ງນີ້?**

ຄຽງຄູ່ກັບການປ່ຽນສະຖານະທາງດ້ານກົດຫມາຍຂອງທະນາຄານ, ທະນາຄານພວກເຮົາກໍ່ຍັງມີການປ່ຽນແປງລະບົບການທະນາຄານ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ລູກຄ້າໃນການດຳເນີນທຸລະກຳການເງິນ ແລະ ເພີ່ມຄວາມປອດໄພຂອງລະບົບການທະນາຄານໃຫ້ດີຍິ່ງຂື້ນ.

ເພື່ອທີ່ຈະນຳໃຊ້ລະບົບໃຫມ່ນີ້, ເລກບັນຊີຂອງລູກຄ້າຈະມີການປ່ຽນແປງໃໝ່ ເພື່ອນຳໃຊ້ໃນການດຳເນີນທຸລະກຳການເງິນຢູ່ໃນລະບົບໃຫມ່. ເລກບັນຊີໃໝ່ແມ່ນຈະຖືກນຳໃຊ້ຢ່າງເປັນທາງການນັບແຕ່ວັນທີ **08 ມີນາ 2019.**

**7) ຈາກການປ່ຽນແປງນີ້ແມ່ນໝາຍຄວາມວ່າຍອດເງິນຢູ່ໃນບັນຊີເກົ່າຂອງຂ້າພະເຈົ້າ ຈະຖືກໂອນໄປຫາບັນຊີໃຫມ່ທີ່ຂື້ນກັບ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ ບໍ?**

ແມ່ນແລ້ວ, ຍອດເງິນທັງຫມົດຢູ່ໃນບັນຊີເກົ່າຂອງທ່ານແມ່ນຈະຖືກໂອນໄປບັນຊີໃຫມ່ທີ່ຂື້ນກັບ ກຸ່ມທະນາຄານ ອົດສະຕາລີ ແລະ ນີວຊີແລນຈຳກັດ ສາຂາລາວ.

**8) ຂ້າພະເຈົ້າ ຈຳເປັນຕ້ອງໄດ້ເປີດບັນຊີໃຫມ່ອີກຄັ້ງ ຫລື ບໍ່ ໃນເມື່ອ ຂ້າພະເຈົ້າເຄີຍຖືກແຈ້ງບອກ ກ່ຽວກັບເລກບັນຊີໃຫມ່ ໃນຄັ້ງທີ່ມີການແຈ້ງການຫລ້າສຸດກ່ຽວກັບການປ່ຽນແປງລະບົບໃຫມ່?**

ບໍ່, ທ່ານບໍ່ຈຳເປັນຕ້ອງໄດ້ເຂົ້າໄປເປີດບັນຊີໃຫມ່ອີກຄັ້ງ ເນື່ອງຈາກການເປີດບັນຊີໃຫມ່ ແມ່ນຈະຖືກດຳເນີນຢູ່ໃນລະບົບ ຢ່າງອັດຕະໂນມັດ ໄປພ້ອມໆກັບການປ່ຽນແປງລະບົບຂອງທະນາຄານ.

**9) ທະນາຄານ ເອເອັນແຊັດ ມີແຜນທີ່ຈະອອກຈາກລາວ ຫລື ບໍ່?**

ບໍ່, ທະນາຄານເອເອັນແຊັດ ແມ່ນຍັງຄົງມີຄວາມຫມັ້ນຫມັ້ນສືບຕໍ່ສະຫນັບສະຫນູນການດຳເນີນທຸລະກິດຂອງລູກຄ້າທີ່ເປັນສາຂາຂອງຕ່າງປະເທດ ຢູ່ໃນຂົງເຂດອາຊີ ແລະ ລວມທັງຢູ່ໃນປະເທດລາວ. ທະນາຄານ ເອເອັນແຊັດ ຈະສືບຕໍ່ໃຫ້ການບໍລິການທາງດ້ານຜະລິດຕະພັນຂອງທະນາຄານ ຕາມມາດຕະຖານຂອງທະນາຄານສາກົນ ໃຫ້ແກ່ບັນດາລູກຄ້າລາຍໃຫຍ່ ທີເປັນ ສາຂາຂອງບໍລິສັດຕ່າງປະເທດ ແລະ ບໍລິສັດໃຫຍ່ໆໃນລາວ.

ການຍົກລະດັບ ລະບົບການທະນາຄານ ທີ່ກຳລັງຢູ່ໃນຊ່ວງການດຳເນີນງານນີ້ ແມ່ນຖືເປັນສ່ວນໜຶ່ງຂອງການລົງທືນຂອງທະນາຄານ ເອເອັນແຊັດ ເພື່ອສືບຕໍ່ການດຳເນີນທຸລະກິດໃນ ສ.ປ.ປ ລາວ.

**10) ການປ່ຽນແປງຄັ້ງນີ້ຈະມີຜົນກະທົບຫຍັງຕໍ່ການນຳໃຊ້ຜະລິດຕະພັນ ແລະ ບໍລິການທີ່ຂ້າພະເຈົ້າມີກັບທະນາຄານເອເອັນແຊັດ ໃນປະຈຸບັນ?**

ບໍ່, ທຸກຜະລິດຕະພັນ ແລະ ບໍລິການຂອງທະນາຄານທີ່ທ່ານໄດ້ຊົມໃຊ້ແມ່ນຈະບໍ່ມີການປ່ຽນແປງໃດໆ. ສິ່ງດຽວທີ່ປ່ຽນແປງນັ້ນຄື ຊື່ ຫຼື ສະຖານະທາງກົດຫມາຍຂອງທະນາຄານ ທີ່ທ່ານຈະນຳໃຊ້ໃນທຸລະກຳການເງິນຂອງທ່ານ ແລະ ເລກບັນຊີທີ່ມີກັບທະນາຄານ (ເຊິ່ງຜ່ານມາທາງທະນາຄານໄດ້ເຄີຍແຈ້ງໃຫ້ທ່ານຮັບຊາບ ພ້ອມກັບການແຈ້ງການ ການປ່ຽນແປງລະບົບຂອງທະນາຄານ).

ເຖິງຢ່າງໃດກໍ່ຕາມ, ໃນຊ່ວງທີ່ທະນາຄານຈະດຳເນີນການປ່ຽນແປງລະບົບ, ທ່ານອາດຈະບໍ່ສາມາດດຳເນີນທຸລະກຳທາງລະບົບອີເລັກໂຕຼນິກໄດ້ ໃນຊ່ວງ **5 ໂມງແລງ** ຂອງມື້ວັນທີ **7 ມີນາ 2019** ຫາ **1ໂມງເຊົ້າ** ຂອງມື້ວັນທີ **11**

**ມີນາ 2019**. ທາງທະນາຄານພວກເຮົາ ຂໍໃຫ້ລູກຄ້າດຳເນີນທຸລະກຳ ກ່ອນຊ່ວງເວລາດັ່ງກ່າວນີ້, ລວມທັງແຈ້ງຂໍ້ມູນນີ້ໃຫ້ຄູ່ຮ່ວມທຸລະກິດຂອງທ່ານໃຫ້ຮັບຮູ້ເພື່ອຫລີກລ່ຽງຄວາມບໍ່ສະດວກໃນການດຳເນີນທຸລະກຳການເງິນຂອງທ່ານ.

ເລກບັນຊີຂອງທ່ານຢູ່ໃນລະບົບເລັກໂຕຼນິກ ແມ່ນຈະປ່ຽນເປັນເລກບັນຊີໃຫມ່ໃນມື້ວັນທີ **11 ມີນາ 2019**. ຫລັງຈາກນັ້ນ, ທ່ານກໍ່ຈະຍັງຄົງສາມາດກວດຄືນທຸລະກຳທີ່ຜ່ານມາຢູ່ໃນເລກບັນຊີເກົ່າໄດ້.

**11) ຈະເກີດຫຍັງຂຶ້ນກັບປື້ມແຊັກທີ່ເປັນຊື່ທະນາຄານເກົ່າ?**

ທາງທະນາຄານພວກເຮົາຈະອອກປື້ມແຊັກຫົວໃຫມ່ໃຫ້ລູກຄ້າທຸກທ່ານ ເພື່ອໃຊ້ແທນປື້ມທີ່ເປັນຊື່ເກົ່າ ແລະ ສາມາດນຳໃຊ້ໄດ້ນັບຈາກວັນທີ **11 ມີນາ 2019.**

ລູກຄ້າທຸກທ່ານສາມາດເຂົ້າມາຮັບເອົາປື້ມແຊັກຫົວໃຫມ່ນີ້ຢູ່ທີ່ທະນາຄານຂອງພວກເຮົາ ເລີ່ມຕັ້ງແຕ່ວັນທີ **25 ກຸມພາ 2019**.

ເພື່ອຫລີກລ່ຽງຄວາມບໍ່ສະດວກຕ່າງໆທີ່ອາດເກີດຂື້ນ, ຂໍໃຫ້ລູກຄ້າທຸກທ່ານເຂົ້າມາຮັບເອົາປື້ມແຊັກຫົວໃຫມ່ ແລະ ຢຸດການນຳໃຊ້ປື້ມແຊັກຫົວເກົ່າ ນັບຈາກວັນທີ **11 ມີນາ 2019** ເປັນຕົ້ນໄປ.

ທະນາຄານພວກເຮົາຈະຮັບແຊັກທີ່ເປັນເລກບັນຊີເກົ່າຈົນເຖິງວັນທີ **28 ມີຖຸນາ 2019**, ໂດຍມີເງື່ອນໄຂວ່າ ແຊັກໃບນັ້ນຍັງສາມາດນຳໃຊ້ໄດ້ ແລະ ບໍ່ທັນຫມົດອາຍຸ.

**12) ການປ່ຽນແປງຄັ້ງນີ້ຈະມີຜົນຫຍັງຕໍ່ກັບພະນັກງານ ຫລື ບໍ່?**

ບໍ່, ການປ່ຽນແປງຄັ້ງນີ້ຈະບໍ່ມີຜົນກະທົບໃດໆຕໍ່ພະນັກງານທຸກຄົນຂອງທະນາຄານເອເອັນແຊັດ. ຜູ້ຈັດການຝ່າຍສາຍພົວພັນທີ່ເບິ່ງແຍງບັນຊີ ແລະ ທຸລະກຳການເງິນຂອງທ່ານ ລວມທັງການຕິດຕໍ່ຫາ ທະນາຄານ ເອເອັນແຊັດ ຢູ່ໃນລາວ ກໍ່ບໍ່ມີການປ່ຽນແປງໃດໆ.

**13) ພວກເຮົາຈະສາມາດຕິດຕໍ່ຫາ ສາຂາ ຂອງທະນາຄານ ເອເອັນແຊັດ ທີ່ຢູ່ໃນປະເທດລາວໄດ້ແນວໃດ?**

ທ່ານສາມາດເຂົ້າມາທີ່ ທະນາຄານຂອງພວກເຮົາທີ່ ຖະໜົນ 33 ລ້ານຊ້າງ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ພວກເຮົາດຳເນີນການຈາກວັນຈັນເຖິງວັນສຸກ 8:30 ໂມງເຊົ້າ ຫາ 3:30 ໂມງແລງ.

ຖ້າທ່ານມີຄຳຖາມຕ່າງໆທີ່ກ່ຽວຂ້ອງກັບການປ່ຽນແປງຄັ້ງນີ້, ທ່ານສາມາດ ໂທເຂົ້າຫາ +856 21 222 722 ຫຼື ສົ່ງອີເມວຫາພວກເຮົາຜ່ານ SupportCenter.ANZBusiness@anz.com

ນອກນີ້ ທ່ານຍັງສາມາດເຂົ້າເບິ່ງຂໍ້ມູນທີ່ກ່ຽວຂ້ອງ ເພີ່ມເຕີມໄດ້ທີ່ https://institutional.anz.com/markets/laos/en